ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ຫ້ອງການ

02098 - ຮ

ເລກທີ: /ຍທຂ.ຫກ

ນະຄອນຫຼວງວຽງຈັນ, ວັນທີ: 27 JAN 2022

# ແຈ້ງການ

ເລື່ອງ: ການສັນຈອນຜ່ານເສັ້ນທາງ 13 ເໜືອ ສີ່ແຍກໄຟແດງສີເກີດ ນະຄອນຫຼວງວຽງຈັນ ຫາ ສາມແຍກໂພນໂຮງ ແຂວງວຽງຈັນ ແລະ ເສັ້ນທາງ 13 ໃຕ້ ກມ 71 ແຂວງບໍລິຄໍາໄຊ ຫາ ກມ 346 ແຂວງຄໍາມ່ວນ.

- ອີງຕາມ ກອງປະຊຸມຄັ້ງວັນທີ 14 ມັງກອນ 2022 ລະຫວ່າງກົມຂົວທາງ ແລະ ຜູ້ຮັບເໝົາ ໂຄງການປັບປຸງ ແລະ ສ້ອມແປງທາງ 13 ໃຕ້.
- ອີງຕາມ ໜັງສືສະເໜີຂອງ ໂຄງການປັບປຸງ ແລະ ສ້ອມແປງທາງ 13 ເໜືອ ແລະ ໂຄງການປັບປຸງ ແລະ ສ້ອມແປງທາງ 13 ໃຕ້ ສະບັບເລກທີ 011-22/ທ 13.ຂບຊ, ລົງວັນທີ 20/01/2022.

ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ, ຂໍແຈ້ງມາຍັງບັນດາທ່ານ ທີ່ສັນຈອນຜ່ານຕາມທາງ 13 ເໜືອ ຊ່ວງແຕ່ສີ່ແຍກໄຟແດງສີເກີດ ນະຄອນຫຼວງວຽງຈັນ ຫາ ສາມແຍກໂພນໂຮງ ແຂວງວຽງຈັນ ແລະ ເສັ້ນທາງ 13 ໃຕ້ ກມ 71 ບ້ານໄຊສະຫວ່າງ ເມືອງທ່າພະບາດ ແຂວງບໍລິຄໍາໄຊ ຫາ ກມ 346 ບ້ານນາບອນ ເມືອງທ່າແຂກ ແຂວງ ຄໍາມ່ວນ ຊາບທົ່ວເຖິງກັນວ່າ ປະຈຸບັນເສັ້ນທາງ ທັງສອງຊ່ວງດັ່ງກ່າວແມ່ນກໍາລັງຢູ່ໃນລະຫວ່າງການກໍ່ສ້າງປັບປຸງ ແລະ ຂະຫຍາຍໜ້າທາງຈຶ່ງເຮັດໃຫ້ການສັນຈອນບໍ່ສະດວກ ແລະ ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານທີ່ສັນຈອນຜ່ານເສັ້ນທາງສອງຊ່ວງດັ່ງກ່າວ ຕະຫຼອດຮອດບັນດາທ່ານທີ່ພັກອາໄສຢູ່ລຽບຕາມແຄມທາງ ຈົ່ງມີສະຕິລະມັດລະວັງໃນການສັນຈອນ ແລະ ເອົາໃຈໃສ່ປະຕິບັດຕາມກົດຈະລາຈອນ ແລະ ປ້າຍສັນຍານ ປ້າຍເຕືອນຕ່າງໆ ທີ່ຕິດຕັ້ງໄວ້ຕາມທາງຢ່າງເຂັ້ມງວດ ໂດຍຈໍາກັດການໃຊ້ຄວາມໄວສູງສຸດບໍ່ໃຫ້ເກີນ 50 ກມ/ຊມ ພາຍໃຕ້ການຄວບຄຸມຂອງຕໍາຫລວດຈະລາຈອນ ທັງນີ້ກໍ່ເພື່ອປ້ອງກັນອຸປະຕິເຫດຕາມເສັ້ນທາງ ແລະ ຄວາມປອດໄພຕໍ່ຊີວິດ ແລະ ຊັບສິນຂອງໝົດທຸກຄົນ.

ຫົວໜ້າຫ້ອງການ

ຫ້ອງການ

ປອ. ສຸດຖະໜອມ ອິນທະວົງ